Employment Development Department
State of California

ຊື່ຜູ້ຮ້ອງຂໍ
ຖະໜົນ
ເມືອງ, ລັດ ລະຫັດໄປສະນີ

ຕົວຢ່າງ

# ແຈ້ງການເລກບັນຊີລູກຄ້າພະແນກພັດທະນາການຈ້າງງານ

ແຈ້ງການນີ້ແຈ້ງບອກເລກບັນຊີລູກຄ້າຂອງພະແນກພັດທະນາການຈ້າງງານ (EDD) ໃຫ້ແກ່ທ່ານ. ຈຳເປັນຕ້ອງໄດ້ມີເລກບັນຊີລູກຄ້າຂອງພະແນກ EDD ເພື່ອລົງທະບຽນໃຊ້ UI Online ແລະ ອາດຈະຖືກນຳໄປໃຊ້ແທນເລກປະກັນສັງຄົມຂອງທ່ານ ເມື່ອລົມກັບຜູ້ຕາງໜ້າຂອງພະແນກ EDD.

UI Online^SM^ ແມ່ນວິທີການທີ່ວ່ອງໄວ, ສະດວກ, ແລະ ປອດໄພ ເພື່ອເຂົ້າຫາຂໍ້ມູນການຮ້ອງຂໍປະກັນໄພຫວ່າງງານ (UI), ຢັ້ງຢືນຜົນປະໂຫຍດທີ່ສືບຕໍ່ໄດ້ຮັບ*, ເປີດຄຳຮ້ອງຂໍທີ່ມີຢູ່ແລ້ວຄືນໃໝ່, ເບິ່ງການເຄື່ອນໄຫວການຈ່າຍເງິນ, ແລະ ຈັດການຄຳຮ້ອງຂໍຂອງທ່ານໄດ້ຕະຫຼອດ 24 ຊົ່ວໂມງຕໍ່ມື້, 7 ວັນຕໍ່ອາທິດ.

ເພື່ອຄວາມສະດວກເພີ່ມເຕີມ, ມີ UI Online Mobile^SM^ ໃຫ້ສຳລັບຜູ້ໃຊ້ສະມາດໂຟນ ແລະ ແທັບເລັດນຳອີກ.

**ເລກບັນຊີລູກຄ້າ EDD ຂອງທ່ານແມ່ນ:**

**1234567890**

ພະແນກ EDD ເອົາໃຈໃສ່ຢ່າງຈິງຈັງໃນການຮັກສາຄວາມປອດໄພຂໍ້ມູນລັບ. ຈົ່ງຢ່າບອກເລກບັນຊີລູກຄ້າ EDD ຂອງທ່ານໃຫ້ຜູ້ອື່ນຮູ້.

**ໄດ້ຮັບການຈ່າຍເງິນທີ່ເປັນຜົນປະໂຫຍດຂອງທ່ານໄວຂຶ້ນ!** ລົງທະບຽນໃຊ້ UI Online ແລະ ເມື່ອຮອດເວລາຢັ້ງຢືນແມ່ນຈະມີອີເມວການແຈ້ງເຕືອນສົ່ງໄປໃຫ້. ໂດຍສະເລ່ຍແລ້ວ, ການຢັ້ງຢືນທີ່ສົ່ງຜ່ານທາງ UI Online ແມ່ນຖືກດຳເນີນການໄວກວ່າການສົ່ງທາງເຈ້ຍ ຫຼື ທາງໂທລະສັບ.

ເພື່ອຕັ້ງບັນຊີ UI Online, ໃຫ້ປະຕິບັດຕາມສາມຂັ້ນຕອນເຫຼົ່ານີ້ຄື:

1. **ສ້າງ**ການເຂົ້າສູ່ລະບົບທີ່ປອດໄພຜ່ານ Benefit Programs Online (ໂປຣແກຣມຜົນປະໂຫຍດອອນລາຍ) ຢູ່ທີ່ **www.edd.ca.gov/BPO**.
2. **ລົງທະບຽນ**ໃຊ້ UI Online ດ້ວຍການນຳໃຊ້ເລກບັນຊີລູກຄ້າ EDD ຂອງທ່ານ.
3. **ເຂົ້າຫາ** UI Online ຫຼື UI Online Mobile ຜ່ານ Benefit Programs Online (ໂປຣແກຣມຜົນປະໂຫຍດອອນລາຍ) ເພື່ອຢັ້ງຢືນຜົນປະໂຫຍດຂອງທ່ານ ແລະ ອື່ນໆ.

ເພື່ອໃຫ້ໄດ້ປະສົບການໃນການນຳໃຊ້ UI Online ຫຼາຍທີ່ສຸດ, ມີເຄື່ອງມືຫຼາຍຢ່າງໃຫ້ນຳອີກໄດ້ແກ່ *UI Online^SM^ User Guide,* DE 2338G, (ຄູ່ມືຜູ້ໃຊ້ UI Online^SM^), FAQs (ຄຳຖາມທີ່ມັກຖາມເລື້ອຍໆ), ແລະ ການແນະນຳທາງວິດີໂອ ເຊິ່ງສາມາດເບິ່ງໄດ້ຢູ່ທີ່ **www.edd.ca.gov/UI_Online**.

## ຢ່າຊັກຊ້າ. ລົງທະບຽນຕັ້ງບັນຊີຂອງທ່ານໃນມື້ນີ້ ເພື່ອນຳໃຊ້ຜົນປະໂຫຍດ ແລະ ຄວາມສະດວກສະບາຍຫຼາຍຢ່າງຂອງ UI Online.

ຖ້າທ່ານໄດ້ສ້າງບັນຊີເຂົ້າສູ່ລະບົບຜ່ານ Benefit Programs Online (ໂປຣແກຣມຜົນປະໂຫຍດອອນລາຍ) ແລະ ໄດ້ລົງທະບຽນໃຊ້ບັນຊີ UI Online ແລ້ວ, ທ່ານບໍ່ຕ້ອງສົນໃຈແຈ້ງການນີ້.

* ລູກຄ້າທີ່ຮ້ອງຂໍສ່ວນແບ່ງບາງສ່ວນ ຫຼື ການແບ່ງປັນວຽກແມ່ນບໍ່ສາມາດຢັ້ງຢືນຜົນປະໂຫຍດທາງອອນລາຍໄດ້ໃນເວລານີ້ ແຕ່ສາມາດເຂົ້າເຖິງຄຸນສົມບັດອື່ນຂອງ UI Online^SM^ ຫຼາຍຢ່າງໄດ້.